ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ພະຍາດ ແລະ ແກ້ໄຂການລະບາດພະຍາດ COVID-19

ເລກທີ 4303 /ສພກ

ນະຄອນຫຼວງວຽງຈັນ, ວັນທີ 17 ກັນຍາ 2021

# ໜັງສືແຈ້ງການ

ຮຽນ: ບັນດາສຳນັກງານອົງການ, ສະຖາບັນການສຶກສາ, ສະຖານທີ່ບໍລິການ ທັງພາກລັດ ແລະ ເອກະກະຊົນ, ເຈົ້າຂອງຜູ້ປະກອບການຕ່າງໆ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການລະບາດພະຍາດ COVID-19 ຢູ່ ສປປ ລາວ.

- ອີງຕາມ ຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງ ຄະນະສະເພາະກິດເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2021;
- ອີງຕາມ ຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍ ການປັບປຸງ ຄະນະສະເພາະກິດເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ສະບັບເລກທີ 22/ນຍ, ລົງວັນທີ 1 ເມສາ 2021;
- ອີງຕາມ ການຕົກລົງເປັນເອກະພາບຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການ ລະບາດ ຂອງພະຍາດ COVID-19 ຄັ້ງວັນທີ 03 ກັນຍາ 2021;
- ອີງຕາມ ແຈ້ງການວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການ ລະບາດ ຂອງພະຍາດ COVID-19 ໃນໄລຍະວັນທີ 16-30 ກັນຍາ 2021.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຂໍຖືເປັນ ກຽດແຈ້ງ ມາຍັງທ່ານຊາບວ່າ : ອີງຕາມສະພາບການລະບາດໃນແຕ່ລະວັນ ເຫັນວ່າມີການແຜ່ລະບາດຂອງພະຍາດ COVID-19 ຫຼາຍເຂດ ຢູ່ ສປປ ລາວ ຂະຫຍາຍເປັນວົງກ້ວາງ ແລະ ສືບຕໍ່ມີກໍລະນີຕິດເຊື້ອເພີ່ມຂຶ້ນ ໃນຊຸມຊົນ, ບາງສຳນັກງານ, ອົງການ, ລັດວິສາຫະກິດ ແລະ ບໍລິສັດເອກະຊົນຕ່າງໆ. ສະນັ້ນ ເພື່ອຮັບປະກັນ ສະຖານທີ່ເຮັດວຽກໃຫ້ໄດ້ຮັບຄວາມປອດໄພ ບໍ່ໃຫ້ມີການຕິດເຊື້ອ ແລະ ແຜ່ລະບາດຂອງພະຍາດ COVID-19 ນີ້, ຈຶ່ງຂໍແຈ້ງມາຍັງທ່ານ ປະຕິບັດຕາມແບບຟອມປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ໃນ 10 ຂໍ້ຄວນປະຕິບັດມາດຕະການ ປ້ອງກັນ COVID-19, ເພື່ອຈັດລະບຽບ ໃນສະຖານທີ່ເຮັດວຽກຂອງທ່ານ ໂດຍສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລະ ລາຍງານ ໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມພະຍາດ ແລະ ແກ້ໄຂການລະບາດພະຍາດ COVID-19 (ກະຊວງສາທາລະນະສຸກ) ເພື່ອດຳເນີນການພິຈາລະນາໃນຂັ້ນຕໍ່ໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໜັງສືແຈ້ງການສະບັບນີ້ຢ່າງເຂັ້ມງວດ.

<u>ໝາຍເຫດ</u>: ສຳລັບຂໍ້ມູນລາຍລະອຽດ ແມ່ນໃຫ້ເບິ່ງ ລາຍການປະເມີນ ທີ່ຄັດຕິດມາພ້ອມເອກະສານແຈ້ງການສະບັບນີ້.

ລັດຖະມົນຕີ

ຮອງຫົວໜ້າຄະນະສະເພາະກິດ

ປອ.ດຣ. ບຸນແຝງ ພູມມະໄລສິດ

*ແບບຟອມປະເມີນ ສະຖານທີເຮັດວຽກໃຫ້ມີຄວາມປອດໄພ ມີທັງໝົດ 10 ຂໍ້ຄວນປະຕິບັດມາດຕະການ ປ້ອງ ກັນ COVID-19*

| 10 ຂໍ້ຄວນປະຕິບັດ ສຳລັບ ສະຖານທີເຮັດ ວຽກ | ລາຍລະອຽດການປະເມີນ | ການຈັດຕັ້ງປະຕິບັດ | | | ວັນເວລາທີ່ຈະ ສຳເລັດການ ປະຕິບັດ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|
| | | 😊 ແມ່ນ | 🙁 ບໍ່ແມ່ນ | ➡ ກຳລັງ ດຳເນີນ | | |
| ຂໍ້ຄວນປະຕິບັດທີ 1 ການວາງແຜນ, ຄຸ້ມຄອງ , ຕິດຕາມ ແລະ ປະຕິບັດການປະຕິບັດ ມາດຕະການ ຄວບຄຸມ, ປ້ອງກັນພະຍາດ ໂຄ ວິດ-19 (5 ຂໍ້)  | ☞ ຜູ້ບໍລິຫານໃຫ້ການສະໜັບສະໜູນໂດຍກຳ ນົດເປັນນະໂຍບາຍກ່ຽວກັບການສົ່ງ ເສີມສຸຂະພາບ ແລະ ອະນາໄມສິ່ງແວດ ລ້ອມ ແລະ ມີການວາງແຜນຈັດສັນ ງົບປະ ມານສຳລັບການດຳເນີນກິດຈະກຳມີການ ວາງແຜນຕອບໂຕ້ຢ່າງຕໍ່ເນື່ອງຢູ່ໃນສະຖານ ທີເຮັດວຽກ | ☐ | ☐ | ☐ | | |
| | ☞ ມີການແຕ່ງຕັ້ງຜູ້ຮັບຜິດຊອບພາຍໃນສຳລັບ ການຕິດຕາມກວດກາ ໂດຍນຳໃຊ້ ລາຍການ ປະເມີນນີ້ | ☐ | ☐ | ☐ | | |
| | ☞ ມີການປະເມີນຜົນ ແລະ ລາຍງານຄວາມຄືບ ໜ້າຂອງການຈັດຈັ້ງປະຕິບັດມາດຕະການ | ☐ | ☐ | ☐ | | |
| | ☞ ການກຳນົດ ແລະ ເປີດໂອກາດໃຫ້ຜູ້ປະ ຕິບັດ ມີສ່ວນຮ່ວມໃນກິດຈະກຳສົ່ງເສີມສຸຂະພາບ ແລະ ອະນາໄມສິ່ງແວດລ້ອມ ຢ່າງ ຕໍ່ເນື່ອງ | ☐ | ☐ | ☐ | | |
| | ☞ ເຜີຍແຜ່ຂໍ້ມູນຂ່າວສານພາຍໃນໂດຍຜ່ານສື່ ໂຄສະນາຕ່າງໆເຊັ່ນ: ໂທລະໂຄ່ງ, ຈໍ ໂທລະພາບ, ໂປສເຕີ, ແຜ່ນພັບ ແລະ ອື່ນໆ | ☐ | ☐ | ☐ | | |
| ຂໍ້ຄວນປະຕິບັດທີ 2: ການຈັດລະບຽບ ສະຖານທີ່ເຮັດວຽກ | ☞ ມີການວັດແທກອຸນຫະພູມ ທາງເຂົ້າ-ອອກ | ☐ | ☐ | ☐ | | |
| | ☞ ຈັດລະບຽບການເຮັດວຽກໃຫ້ມີການຮັກສາ ໄລຍະຫ່າງລະຫວ່າງບຸກຄົນຕໍ່ບຸກຄົນ ຢ່າງ ໜ້ອຍ 1 ແມັດ (ໝາຍສັນຍາລັກ | ☐ | ☐ | ☐ | | |

| | | | | | | |
|---|---|---|---|---|---|---|
| **ໂດຍການຮັກສາໄລຍະຫ່າງ**<br>**(8 ຂໍ້)**<br><br>**ຮັກສາໄລຍະຫ່າງ ແລະ ຫຼີກລ່ຽງ ຊຸມນຸມແອອັດ** | ການຮັກສາໄລຍະຫ່າງ) ສຳລັບສະຖານທີເຮັດວຽກ ແລະ ພື້ນທີສ່ວນລວມ ເຊັ່ນ: ທາງເຂົ້າ - ອອກ, ຂັ້ນໄດ, ການລຽນຄິວ ຫລື ການເຂົ້າແຖວຂອງພະນັກງານ,ແຂກ /ລູກຄ້າ. | | | | | |
| | ☞ ການກຳນົດ ແລະ ເລືອກໃຊ້ວິທີການຕິດຕໍ່ສື່ສານ ເພື່ອລຸດຜ່ອນຄວາມຈຳເປັນໃນການຈັດກອງປະຊຸມ ເຊັ່ນ: ນຳໃຊ້ການປະຊຸມໂທທາງໄກແທນ | ☐ | ☐ | ☐ | | |
| | ☞ ມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນຢູ່ທຸກພື້ນທີ່ຂອງການເຮັດວຽກ | ☐ | ☐ | ☐ | | |
| | ☞ ມີການສັບປ່ຽນ ເວລາໃນການເຮັດວຽກຂອງພະນັກງານ ຫຼື ສົ່ງເສີມໃຫ້ມີການເຮັດວຽກທາງໄກ, ທາງໂທລະສັບ ເພື່ອຫລີກລ່ຽງຄວາມແອອັດ | ☐ | ☐ | ☐ | | |
| | ☞ ຢຸດຕິການດຳເນີນກິດຈະກຳຕ່າງໆ ທີ່ມີການສຳຜັດຢ່າງໃກ້ຊິດເຊັ່ນ: ການໃຊ້ພາຊະນະຮ່ວມກັນ ( ຖ້ວຍ, ບ່ວງ, ຈອກນ້ຳ ແລະອື່ນໆ), ບໍ່ກິນເຂົ້າຮ່ວມກັນ, ບໍ່ຈັດງານກິນລ້ຽງ, ບໍ່ໃຫ້ມີກິດຈະກຳກິລາລວມໝູ່ຂອງພະ ນັກງານ ແລະ ອື່ນໆ.. | ☐ | ☐ | ☐ | | |
| **ຂໍ້ຄວນປະຕິບັດ 3:**<br>**ສົ່ງເສີມການອະນາໄມມື**<br>**(8 ຂໍ້)**<br><br>**ໝັ່ນລ້າງມືໃຫ້ສະອາດ** | ☞ ມີຈຸດລ້າງມື ຢູ່ບໍລິເວນ ໜ້າ ທາງເຂົ້າ-ອອກອາຄານ, ບໍລິເວນລໍຖ້າ, ບໍລິເວນໃກ້ລິບແຕ່ລະຊັ້ນ, ໜ້າຫ້ອງປະຊຸມ, ໜ້າຫ້ອງເຮັດວຽກ, ຮ້ານອາຫານ ແລະ ຫ້ອງນ້ຳ; | ☐ | ☐ | ☐ | | |
| | ☞ ມີສິ່ງອຳນວຍຄວາມສະດວກທຳຄວາມສະອາດມືເຊັ່ນ:<br>☞ ສະບູ | ☐ | ☐ | ☐ | | |
| | ☞ ເຈ້ຍເຊັດມື | ☐ | ☐ | ☐ | | |
| | ☞ ນ້ຳສະອາດ | ☐ | ☐ | ☐ | | |
| | ☞ ເຫຼົ້າ 70 ອົງສາ | ☐ | ☐ | ☐ | | |

| | | | | | | |
|---|---|---|---|---|---|---|
| | ☞ ທຸກຄົນທີ່ເຂົ້າມາໃນອາຄານ ສຳນັກງານ, ອົງການ ສາມາດເຂົ້າເຖິງສະຖານທີ່ລ້າງມືໄດ້ສະດວກ | ☐ | ☐ | ☐ | | |
| | ☞ ສຳລັບສຳນັກງານທີ່ມີການສະແກນລາຍມື ຫຼື ປໍ້າບັດ ເພື່ອລົງທະບຽນ ແມ່ນໃຫ້ມີເຈວ ຫຼື ເຫຼົ້າ 70% ຕັ້ງຢູ່ຈຸດດັ່ງກ່າວເພື່ອຂ້າເຊື້ອມືກ່ອນ ແລະ ຫຼັງຈາກສຳຜັດ; | ☐ | ☐ | ☐ | | |
| | ☞ ມີໂປສເຕີການອະນາໄມມື ຢູ່ບໍລິເວນສະຖານທີ່ລ້າງມື | ☐ | ☐ | ☐ | | |
| ຂໍ້ຄວນປະຕິບັດ 4 ສົ່ງເສີມການ ອະນາໄມ ແລະ ຂ້າເຊື້ອ (2 ຂໍ້)  | ☞ ມີການເຮັດຄວາມສະອາດ ແລະ ຂ້າເຊື້ອເປັນປະຈຳ ຢູ່ທຸກພື້ນທີ່ ທີ່ມີຄວາມສ່ຽງ ເຊັ່ນ: ໜ້າໂຕະ, ຕັ່ງ, ມືຈັບ, ລູກບິດປະຕູ, ຮາວຈັບຂັ້ນໄດ ແລະ ປ່ອງຢ້ຽມ, ປັກໄຟ, ບ່ອນເປີດ-ປິດໄຟ, ເຮືອນຄົວ, ຫ້ອງນໍ້າ, ອ່າງລ້າງມື ແລະອື່ນໆ | ☐ | ☐ | ☐ | | |
| | ☞ ໃຫ້ມີພະນັກງານຮັບຜິດຊອບໃນການເຮັດອະນາໄມ ແລະ ຂ້າເຊື້ອ | ☐ | ☐ | ☐ | | |
| ຂໍ້ຄວນປະຕິບັດ 5 ສົ່ງເສີມໃຫ້ມີການສັກວັກຊີນ (1 ຂໍ້)   | ☞ ສົ່ງເສີມໃຫ້ມີແຜນສັກວັກຊີນໃນສະຖານທີເຮັດວຽກ ແລະ ຊຸກຍູ້ໃຫ້ພະນັກງານໄດ້ຮັບວັກຊີນຢ່າງທົ່ວເຖິງ | ☐ | ☐ | ☐ | | |
| | ☞ ພະນັກງານໄດ້ສັກຢາກັນພະຍາດ ເຂັມ 1 | ......................... ຄົນ | | | | |
| | ☞ ພະນັກງານໄດ້ສັກຢາກັນພະຍາດຄົບ 2ເຂັມ | ......................... ຄົນ | | | | |
| | ☞ ພະນັກງານຍັງບໍ່ທັນສັກຢາຈັກຄົນ | ......................... ຄົນ | | | | |
| ຂໍ້ຄວນປະຕິບັດ 6 ສົ່ງເສີມໃຫ້ມີການໃສ່ຜ້າອັດປາກ-ດັງເປັນປະຈຳ ແລະ ເໝາະສົມ (2 ຂໍ້) | ☞ ສົ່ງເສີມໃຫ້ພະນັກງານໃສ່ ຜ້າອັດປາກ-ດັງ ໃນ ແລະ ນອກສະຖານທີເຮັດວຽກຕະຫຼອດເວລາ | ☐ | ☐ | ☐ | | |
| | ☞ ໃຫ້ມີການປ່ຽນ ຜ້າອັດປາກ-ດັງ ທຸກຄັ້ງເມື່ອຮູ້ສຶກປຽກຊຸ່ມ ຫຼື ເຫັນວ່າມີການເປິເປື້ອນ | ☐ | ☐ | ☐ | | |

| | | | | | | |
|---|---|---|---|---|---|---|
|  ໃສ່ຜ້າອັດປາກ - ດັງ | | | | | | |
| ຂໍ້ຄວນປະຕິບັດ 7 ສິ່ງເສີມສະຖານທີໃຫ້ມີອາກາດຖ່າຍເທ (2ຂໍ້) | ☞ ເປີດປະຕູ, ປ່ອງຢ້ຽມ, ພັດລົມ ແລະ ເຄື່ອງດູດອາກາດ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານຖ່າຍເທໄດ້ດີ | ☐ | ☐ | ☐ | | |
|  ເປີດປ່ອງຢ້ຽມ ແລະ ລະບາຍອາກາດໃຫ້ ຖ່າຍເທສະດວກ | ☞ ໃຊ້ເຄື່ອງປັບອາກາດ (ແອ), ແຕ່ຫ້າມບໍ່ໃຫ້ປັບໂໝດ ພັດລົມແອເປັນ “ໂອໂຕ”. | ☐ | ☐ | ☐ | | |
| ຂໍ້ຄວນປະຕິບັດ 8 ສິ່ງເສີມມາລະຍາດໃນການໄອຈາມ (1 ຂໍ້)  ປິດປາກ - ດັງ ດ້ວຍຂໍ້ພັບແຂນ ຫຼື ເຈ້ຍທິດຊູ້ | ☞ ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ຂໍ້ພັບແຂນສອກ ແລ້ວລ້າງມືດ້ວຍນໍ້າສະອາດໃສ່ສະບູ, ເຈວຂ້າເຊື້ອມື ຫຼື ເຫຼົ້າ 70%; | ☐ | ☐ | ☐ | | |
| ຂໍ້ຄວນປະຕິບັດ 9 ການທ້ອນໂຮມຂີ້ເຫຍື້ອ (5 ຂໍ້) | ☞ ມີການແຍກປະເພດຂີ້ເຫຍື້ອບໍ<br>- ຂີ້ເຫຍື້ອ ປະເພດ ຜ້າອັດປາກ-ດັງ<br>- ຂີ້ເຫຍື້ອ ອື່ນໆ | ☐ | ☐ | ☐ | | |
| | ☞ ມີພາຊະນະບັນຈຸຂີ້ເຫຍື້ອພຽງພໍບໍ | ☐ | ☐ | ☐ | | |
|  | ☞ ຂີ້ເຫຍື້ອ ທົ່ວໄປທີ່ ອອກຈາກ ສະຖານທີ່ເຮັດວຽກ ໃຫ້ຖິ້ມໃສ່ຖົງສີດໍາໃຫ້ ຂີ້ເຫຍື້ອຢູ່ລະຫວ່າງ ¾ ຂອງຖົງ ແລະ ມັດປາກຖົງໃຫ້ແຈບດີ | ☐ | ☐ | ☐ | | |

| | | | | | | |
|---|---|---|---|---|---|---|
| | ☞ ປະສານ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳເອົາຂີ້ເຫຍື້ອ ດັ່ງກ່າວໄປກຳຈັດ ພາຍໃນ 24 ຊມ | ☐ | ☐ | ☐ | | |
| | ☞ ຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ຖົງຢາງ 2 ຊັ້ນມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. | ☐ | ☐ | ☐ | | |
| **ຂໍ້ຄວນປະຕິບັດ 10 ນະໂຍບາຍຕໍ່ພະນັກງານ ມີອາການ ຫລື ບໍ່ ສະບາຍ (3 ຂໍ້)**   | ☞ ບຸກຄົນທີ່ມີອາການ ຫລື ບໍ່ສະບາຍ ຄວນພັກຜ່ອນຢູ່ບ້ານ ແລະ ລາຍງານໃຫ້ຫົວໜ້າສາຍງານຕົນເອງຮັບຮູ້ | ☐ | ☐ | ☐ | | |
| | ☞ ມີການຄຸ້ມຄອງສຸຂະພາບຂອງພະນັກງານ ກຳມະກອນໃນເວລາເຈັບເປັນ | ☐ | ☐ | ☐ | | |
| | ☞ ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ | ☐ | ☐ | ☐ | | |

| | | |
|---|---|---|
| **ສັງລວມ: ຄະແນນເຕັມ 35**<br>**ລະດັບດີເດັ່ນ : 31-35 ຄະແນນ 90-100%**<br>**ລະດັບດີ: 28-30 ຄະແນນ 80-89%**<br>**ລະດັບກາງ: 24-27 ຄະແນນ 70-79%**<br>**ລະດັບອ່ອນ < 24 ຄະແນນ < 69%** | **ຜົນການປະເມີນ:......................** | **ເປີເຊັນ: ..........** |

**ພາກສະເໜີ**

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

**ຜູ້ປະກອບການ** **ທີມງານປະເມີນ:**

**1.**

**2.**

**3.**

**4.**

***ເງື່ອນໄຂໃນການອອກໃບຢັ້ງຢືນໃຫ້ກັບສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພຈາກ COVID-19:***

**I. (ດີເດັ່ນ ):** ທຸກສະຖານທີ່ເຮັດວຽກ , ບໍລິສັດ, ຜູ້ປະກອບການ, ທີ່ໄດ້ຈັດຕັ້ງປະຕິບັດຕາມ ຂໍ້ຄວນປະຕິບັດ, ຊຶ່ງ ຄະແນນຢູ່ໃນລະ ຫວ່າງ 29-32 ຄະແນນ   ຫຼື 90% ຂື້ນໄປ ແມ່ນສາມາດ ມອບໃບຢັ້ງຢືນໃຫ້ໄດ້ ພາຍໃນ 10ວັນ ລັດຖະການ ຫຼັງການປະເມີນ.

**II.  (ດີ ):** ທຸກສະຖານທີ່ເຮັດວຽກ , ບໍລິສັດ, ຜູ້ປະກອບການ, ທີ່ໄດ້ຈັດຕັ້ງປະຕິບັດຕາມ ຂໍ້ຄວນປະຕິບັດ, ຊຶ່ງ ຄະແນນຢູ່ໃນລະຫວ່າງ 26-28 ຄະແນນ    ຫຼື 80-89% ໃຫ້ມີການປັບປຸງ ແລະ ປະເມີນຄືນໃຫ້ໄດ້ 90% ຂື້ນໄປ ຈິ່ງສາມາດມອບໃບຢັ້ງຢືນໃຫ້ໄດ້ ພາຍໃນ 10ວັນ ລັດຖະການ .

**III.  (ປານກາງ):** ທຸກສະຖານທີ່ເຮັດວຽກ , ບໍລິສັດ, ຜູ້ປະກອບການ, ທີ່ໄດ້ຈັດຕັ້ງປະຕິບັດຕາມ ຂໍ້ຄວນປະຕິບັດ, ຊຶ່ງ ຄະແນນຢູ່ໃນ ລະຫວ່າງ 22-25 ຄະແນນ    ຫຼື 70-79% ໃຫ້ມີການປັບປຸງ ແລະ ປະເມີນຄືນບໍ່ໃຫ້ເກີນ 2 ຄັ້ງ ພາຍໃນ 10ວັນ ລັດຖະການໃຫ້ໄດ້ 90% ຂື້ນໄປ ຈິ່ງສາມາດມອບໃບຢັ້ງຢືນໃຫ້ ໄດ້ ພາຍໃນ 10ວັນ ລັດຖະການ

**IV.  (ອ່ອນ):** ທຸກສະຖານທີ່ເຮັດວຽກ , ບໍລິສັດ, ຜູ້ປະກອບການ, ທີ່ໄດ້ຈັດຕັ້ງປະຕິບັດຕາມ ຂໍ້ຄວນປະຕິບັດ, ຊຶ່ງ ຄະແນນ ຕໍ່າກ່ວາ 21   ຫຼື ຕໍ່າກ່ວາ 69% ໃຫ້ມີການປັບປຸງຢ່າງຮີບດ່ວນ ຫຼັງຈາກນັ້ນ ປະເມີນຄືນບໍ່ໃຫ້ເກີນ 2 ຄັ້ງ ຖ້າຍັງບໍ່ມີການປັບປຸງ ແມ່ນຈະໄດ້ສະເໜີໃຫ້ຄະນະສະເພາະກິດແຕ່ລະຂັ້ນ ພິຈາລະນາ ປຸດການດຳເນີນງານຊົ່ວຄາວ ເພື່ອປັບປຸງ ຈົນກ່ວາຈະໄດ້ ຕາມເງື່ອນໄຂ 90% ຂື້ນໄປ, ຈິ່ງຈະໄດ້ສະເໜີຄະນະສະເພາະກິດເພື່ອພິຈາລະນາອະນຸຍາດໃຫ້ດຳເນີນງານຕາມປົກກະຕິ   ແລະ ສາມາດມອບໃບຢັ້ງຢືນໃຫ້ໄດ້ ພາຍ ໃນ 10ວັນ ລັດຖະການ